ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ --0064--/ກປ

ນະຄອນຫຼວງວຽງຈັນ, ວັນທີ 16 JAN 2012

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍການຮັບຮອງ ແລະປະກາດໃຊ້ມາດຕະຖານ ແລະຂັ້ນຕອນປະຕິບັດການຄວບຄຸມການລະບາດພະຍາດໄຂ້ຫວັດສັດປີກ

- ອີງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ ເລກທີ 03/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມໃບສະເໜີຂອງກົມລ້ຽງສັດ ແລະການປະມົງ ເລກທີ 2107/ກລປ, ລົງວັນທີ 20 ທັນວາ 2011.

**ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຂໍ້ຕົກລົງ:**

ມາດຕາ 1. ຮັບຮອງ ແລະປະກາດໃຊ້ມາດຕະຖານ ແລະຂັ້ນຕອນປະຕິບັດ ການຄວບຄຸມການລະບາດພະຍາດໄຂ້ຫວັດສັດປີກ.

ມາດຕາ 2. ມອບໃຫ້ກົມລ້ຽງສັດ ແລະການປະມົງ ເປັນເຈົ້າການປະສານສົມທົບກັບພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ, ຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ ແລະພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ຜັນຂະຫຍາຍ ແລະຈັດຕັ້ງປະຕິບັດມາດຕະຖານ ແລະຂັ້ນຕອນປະຕິບັດການຄວບຄຸມການລະບາດພະຍາດໄຂ້ຫວັດສັດປີກ.

ມາດຕາ 3. ຫ້ອງການກະຊວງ, ບັນດາກົມ, ກອງ ແລະສະຖາບັນອ້ອມຂ້າງກະຊວງກະສິກຳ ແລະປ່າໄມ້ ແລະຂະແໜງການອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະຈັດຕັ້ງປະຕິບັດມາດຕະຖານການຄວບຄຸມການລະບາດພະຍາດໄຂ້ຫວັດສັດປີກໃຫ້ປະກົດຜົນເປັນຈິງ.

ມາດຕາ 4. ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

ດຣ. ຕີ ພົມມະສັກ

# ບົດນຳ

ພະຍາດໄຂ້ຫວັດສັດປີກ ແມ່ນພະຍາດຕິດຕໍ່ຮ້າຍແຮງຊະນິດໜຶ່ງ ທີ່ເກີດຈາກເຊື້ອຈຸລະໂລກ ບໍ່ສາມາດປິ່ນປົວໄດ້ ແລະ ຍັງສາມາດຕິດຕໍ່ຈາກສັດສູ່ຄົນ. ນັບແຕ່ເກີດມີການລະບາດຄັ້ງທຳອິດ ເລີ່ມແຕ່ ຕົ້ນປີ 2004 ເປັນຕົ້ນມາ ຈົນເຖິງປັດຈຸບັນນີ້ ພະຍາດດັ່ງກ່າວ ຍັງສືບຕໍ່ຂົ່ມຂູ່ ການລ້ຽງສັດປີກ ແລະ ສຸຂະພາບຂອງຄົນ ຢູ່ ສປປ ລາວ ແລະ ປະເທດໃກ້ຄຽງ ກໍຄືໃນໂລກ ຢ່າງຕໍ່ເນື່ອງ, ເພື່ອປ້ອງກັນ ແລະ ສະກັດກັ້ນ ບໍ່ໃຫ້ພະຍາດ ເກີດລະບາດຂຶ້ນ ໃນ ສ ປ ປ ລາວ ມີຄວາມຈຳເປັນ ຕ້ອງມີມາດຕະການປ້ອງກັນ ແລະ ສະກັດກັ້ນພະຍາດຢ່າງເຂັ້ມງວດ. ໃນນີ້ ມາດຕະການໃນການຄວບຄຸມການແຜ່ລະບາດຂອງເຊື້ອພະຍາດທີ່ດີ ແມ່ນການຂ້າທຳລາຍ ສັດປີກທັງໝົດທີ່ສົງໃສວ່າ ມີການຕິດເຊື້ອພະຍາດໄຂ້ຫວັດສັດປີກ ເພື່ອຕັດວົງຈອນຂອງເຊື້ອພະຍາດ ພ້ອມ ທັງ ຕ້ອງໄດ້ມີການອະນາໄມ ແລະ ຂ້າເຊື້ອ ບໍລິເວນທີ່ສົງໃສວ່າມີເຊື້ອພະຍາດ, ມາດຕະການໃນການຄວບຄຸມການເຄື່ອນຍ້າຍສັດປີກ ແລະ ຜະລິດຕະພັນສັດປີກ ເພື່ອເຮັດໃຫ້ການປະຕິບັດບັນດາມາດຕະການຄວບຄຸມ ພະຍາດ ໃຫ້ຖືກຕ້ອງຕາມຫຼັກວິຊາການ ແລະ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ໃນຂອບເຂດ ທົ່ວປະເທດ ມີຄວາມຈຳເປັນຕ້ອງ ມີມາດຕະຖານການ ແລະ ຂັ້ນຕອນການປະຕິບັດທີ່ຖືກຕ້ອງ ຫລື ເອີ້ນວ່າ Standard Operation Procedure (SOP). ຊຶ່ງມາດຕະຖານ ແລະ ຂັ້ນຕອນຂອງການປະຕິບັດມາດຕະ ການການຄວບຄຸມພະຍາດໄຂ້ຫວັດ ສັດປີກດັ່ງກ່າວ ໄດ້ຖືກສ້າງຂຶ້ນ ໂດຍອີງໃສ່ຫຼັກການທາງດ້ານວິຊາການຂອງອົງການພະຍຸສັດສາກົນ (OIE), ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການປະມົງ, ບັນດາລະບຽບການຕ່າງໆ ທີ່ກ່ຽວຂ້ອງ ລວມທັງຈາກປະສົບການ ຕົວຈິງ ທີ່ໄດ້ປະຕິບັດຜ່ານມາ.

ມາດຕະຖານ ແລະ ຂັ້ນ ຕອນການປະຕິບັດການຄວບຄຸມການລະບາດພະຍາດໄຂ້ຫວັດສັດປີກໄດ້ກວມ ເອົາທັງຫມົດ 5 ມາດ ຕະຖານ ແລະ ຂັ້ນຕອນດັ່ງນີ້:

1. ມາດຕະຖານ ແລະ ຂັ້ນຕອນການປະຕິບັດໃນເຂດຄວບຄູມການລະບາດພະຍາດໄຂ້ຫວັດສັດປີກ;
2. ມາດຕະຖານ ແລະ ຂັ້ນຕອນການປະຕິບັດໃນການສອບສວນ ຫາການລະບາດຂອງພະຍາດ ໃນການລ້ຽງ ສັດປີກ ແບບເປັນຟາມ;
3. ມາດຕະຖານ ແລະ ຂັ້ນຕອນການປະຕິບັດໃນການສອບສວນ ຫາການລະບາດຂອງພະຍາດ ໃນການລ້ຽງ ສັດປີກ ແບບຄອບຄົວ;
4. ມາດຕະຖານ ແລະ ຂັ້ນຕອນການປະຕິບັດໃນການຂ້າທຳລາຍສັດປີກ;
5. ມາດຕະຖານ ແລະ ຂັ້ນຕອນການປະຕິບັດໃນການເກັບຕົວຢ່າງ.

ດັ່ງນັ້ນ, ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງໄດ້ກຳນົດມາດຕະຖານ ແລະ ຂັ້ນຕອນການປະຕິບັດ ການຄວບຄຸມການລະບາດພະຍາດໄຂ້ຫວັດສັດປີກສະບັບນີ້ຂຶ້ນມາ ເພື່ອນຳໃຊ້ເປັນປື້ມຄູ່ມື ທາງດ້ານວິຊາການໃນການ ຄວບຄຸມພະຍາດໄຂ້ຫວັດສັດປີກຊະນິດຮ້າຍແຮງ ໃຫ້ແກ່ນັກວິຊາການຂອງຂະແໜງການລ້ຽງສັດ ແລະ ການປະມົງ ເພື່ອມີຄວາມເປັນເອກະພາບກັນ ໃນການການຈັດຕັ້ງປະຕິບັດວຽກງານ ດັ່ງກ່າວຢ່າງມີປະສິດທິຜົນ ໃນຂອບເຂດທົ່ວປະເທດ.

# ສາລະບານ


ຫົວຂໍ້ ໜ້າ

ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການອະນຸມັດນໍາໃຊ້....................................................4

ບົດນໍາ.................................................................................................................5

**ພາກທີ I: ມາດຕະຖານ ແລະ ຂັ້ນຕອນການປະຕິບັດໃນເຂດຄວບຄຸມພະຍາດໄຂ້ຫວັດສັດປີກ**......6

1. ຈຸດປະສົງ ແລະ ເປົ້າໝາຍ............................................................................ 6
2. ຂອບເຂດການນໍາໃຊ້ ..................................................................................... 6
3. ຄວາມໝາຍຂອງຄໍາສັບ. ................................................................................6
4. ກຸ່ມ ແລະ ເປົ້າໝາຍ.......................................................................................7
5. ບຸກຄົນຮັບຜິດຊອບ........................................................................................7
6. ວັດຖຸອຸປະກອນທີ່ຕ້ອງການ...............................................................................7
7. ບຸກຄະລະກອນ...............................................................................................8
8. ຂັ້ນຕອນການປະຕິບັດ.....................................................................................8
9. ຄວາມສ່ຽງ ແລະ ຂໍ້ຄວນລະມັດລະວັງ.............................................................. 12
10. ເອກະສານອ້າງອີງ........................................................................................ 12
11. ເອກະສານຄັດຕິດ

**ພາກທີ II: ມາດຕະຖານ ແລະ ຂັ້ນຕອນການປະຕິບັດໃນການສອບສວນຫາສາເຫດ ການລະບາດຂອງພະຍາດໄຂ້ຫວັດສັດປີກ ໃນການລ້ຽງສັດປີກແບບຄອບຄົວ**.................................... 13

1. ຈຸດປະສົງ ແລະ ເປົ້າໝາຍ............................................................................ 13
2. ຂອບເຂດການນໍາໃຊ້.....................................................................................13
3. ກຸ່ມເປົ້າໝາຍ............................................................................................... 13
4. ບຸກຄົນ<br>ຮັບຜິດຊອບ.................................................................................................13
5. ວັດຖຸອຸປະກອນທີ່ຕ້ອງການ.............................................................................13
6. ບຸກຄະລະກອນ............................................................................................. 14
7. ບາດກ້າວ ແລະ ຂັ້ນຕອນການປະຕິບັດ.............................................................15
8. ຄວາມສ່ຽງ ແລະ ຂໍ້ຄວນລະມັດລະວັງ.............................................................. 17
9. ເອກະສານອ້າງອີງ........................................................................................ 17
10. ເອກະສານຄັດຕິດ